ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ມະຫາວິທະຍາໄລແຫ່ງຊາດ
ຄະນະນິຕິສາດ ແລະ ລັດຖະສາດ

ເລກທີ 0510 /ຄນລ
ວິທະຍາເຂດດອນນົກຂຸ້ມ, ວັນທີ 24 ມີນາ 2023

# ໜັງສືແຈ້ງການເຊີນ

ຮຽນ : ຮອງຄະນະບໍດີ, ຫົວໜ້າພາກວິຊາ , ຫົວໜ້າພະແນກ , ຫົວໜ້າສູນ;
- ພະນັກງານ, ຄູ ,ອາຈານ, ນັກສຶກສາ ແລະ
- ອະດີດນັກສຶກສາ ຄະນະນິຕິສາດ ແລະ ລັດຖະສາດ ທຸກໆ ຮຸ່ນ.

ເລື່ອງ : ການເຂົ້າຮ່ວມກິດຈະກຳທາງດ້ານວິຊາການ ແລະ ກິລາ, ເພື່ອສ້າງຄວາມສາມັກຄີ ແລະ ພົບປະກັບອາດີດນັກສຶກສາ ຄະນະນນິຕິສາດ ແລະ ລັດຖະສາດ.ເພື່ອສະຫລອງວັນສ້າງຕັ້ງ ຄະນະນິຕິສາດ ແລະ ລັດຖະສາດ ຄົບຮອບ 37 ປີ.

- ອີງຕາມ ຂໍ້ຕົກລົງຂອງອະທິການບໍດີວ່າດ້ວຍການຮັບຮອງວັນສ້າງຕັ້ງຄະນະນິຕິສາດ ແລະ ລັດຖະສາດ ສະບັບເລກທີ 1373/ມຊ, ລົງວັນທີ 3 ພຶດສະພາ 2019.
- ອີງຕາມ ຂໍ້ຕົກລົງວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບວຽກງານສະເຫຼີມສະຫຼອງວັນສ້າງຕັ້ງຄນລຄົບຮອບ 37 ປີ ສະບັບເລກທີ 0458/ຄນລ, ລົງວັນທີ 20 ມີນາ 2023.

ຄະນະບໍດີ ຄະນະນິຕິສາດ ແລະ ລັດຖະສາດ ມະຫາວິທະຍາໄລແຫ່ງຊາດ, ຂໍຮຽນແຈ້ງການມາຍັງ ຮອງຄະນະບໍດີ, ຫົວໜ້າພາກວິຊາ , ຫົວໜ້າພະແນກ , ຫົວໜ້າສູນ, ພະນັກງານ, ຄູ - ອາຈານ, ນັກສຶກສາ ທີ່ກຳລັງສຶກສາໃນປະຈຸບັນ ແລະ ອະດີດນັກສຶກສາຂອງຄະນະນິຕິສາດ ແລະ ລັດຖະສາດ ເຂົ້າຮ່ວມພິທີສະເຫລີມສະຫລອງເພື່ອລະນຶກເຖິງວັນສ້າງຕັ້ງ ຄນລ ຄົບຮອບ **37** ປີ ( 23 ມີນາ 1986 - 23 ມີນາ 2023). ໃນງານຄັ້ງນີ້ຈະມີກິດຈະກຳທາງດ້ານວິຊາການ ແລະ ກິລາ, ການວາງສະແດງ ຂອງກຸ່ມນັກສຶກສາ ແລະ ພາກສ່ວນຕ່າງໆ ເພື່ອສ້າງຄວາມສາມັກຄີຮັກແພງ, ພົບປະກັບອາດີດນັກສຶກສາ ຂອງ ຄະນະນິຕິສາດ ແລະ ລັດຖະສາດ

ພິທີດັ່ງກ່າວ, ຈະໄດ້ຈັດຂຶ້ນ, ໃນວັນເສົາ, ວັນທີ 1 ເມສາ 2023, ເລີ່ມແຕ່ເວລາ 8:00 ເປັນຕົ້ນໄປ ທີ່ ຄະນະນິຕິສາດ ແລະ ລັດຖະສາດ. (ລາຍລະອຽດການເຄື່ອນໄຫວກິດຈະກຳຕ່າງໆທີ່ໄດ້ຕິດຄັດມາພ້ອມ).

ດັ່ງນັ້ນ, ຈຶ່ງໄດ້ມີໜັງສືແຈ້ງການເຊີນມາຍັງບັນດາທ່ານເພື່ອເຂົ້າຮ່ວມກິດຈະກຳດັ່ງກ່າວໃນຄັ້ງນີ້ດ້ວຍ.

ຄະນະບໍດີ

ຄະນະ ນິຕິສາດແລະ ລັດຖະສາດ ມະຫາວິທະຍາໄລແຫ່ງຊາດ

ຮສ.ປອ. ວຽງວິໄລ ທິ່ງຈັນໄຊ

**ຕິດຕໍ່ພົວພັນ:**
**ທ່ານ ອຈ ປທ ເລັ່ງສັກ ບຸນທະລາດ 020 5568 5702**
**ທ່ານ ອຈ ປທ ບຸນເຖິງ ສີທອນແກ້ວຈຳປາ 020 55615113**